ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພາຍໃນ

ເລກທີ 648 /ພນ

ນະຄອນຫຼວງວຽງຈັນ, ວັນທີ 24 ສິງຫາ 2016

# ຂໍ້ຕົກລົງ

## ວ່າດ້ວຍ ການເກັບເງິນປະກອບສ່ວນພັດທະນາບ້ານຂອງປະຊາຊົນ

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບປັບປຸງ ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງພາຍໃນ ສະບັບເລກທີ 253/ນຍ, ລົງວັນທີ 19 ສິງຫາ 2011.

ລັດຖະມົນຕີກະຊວງພາຍໃນ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດຄວາມໝາຍ, ຫຼັກການ, ເປົ້າໝາຍປະກອບສ່ວນ, ການເກັບ, ການຈ່າຍເງິນປະກອບສ່ວນພັດທະນາບ້ານຂອງປະຊາຊົນ ເພື່ອໃຫ້ບ້ານໃຊ້ເປັນບ່ອນອີງ ໃນການຈັດຕັ້ງປະຕິບັດໃຫ້ເປັນເອກະພາບກັນ ແນໃສ່ຮັບປະກັນຫຼັກການລວມສູນເອກະພາບ ໃນການປະຕິບັດນະໂຍບາຍ ພັນທະປະກອບສ່ວນຂອງປະຊາຊົນ, ເສີມຂະຫຍາຍສິດເປັນເຈົ້າ ແລະ ຫົວຄິດປະດິດສ້າງຂອງບ້ານ ໃນການຂຸດຄົ້ນທ່າແຮງມາຮັບໃຊ້ການພັດທະນາບ້ານຂອງຕົນ ໃຫ້ເປັນຫົວໜ່ວຍພັດທະນາເທື່ອລະກ້າວ.

**ມາດຕາ 2 ຄວາມໝາຍຂອງຄຳສັບ**

ເງິນປະກອບສ່ວນພັດທະນາບ້ານຂອງປະຊາຊົນໝາຍເຖິງ ເງິນທີ່ໄດ້ມາຈາກການລະດົມປະຊາຊົນ, ການຈັດຕັ້ງ ແລະ ຫົວໜ່ວຍທຸລະກິດທີ່ຕັ້ງຢູ່ພາຍໃນເຂດປົກຄອງຂອງບ້ານປະກອບສ່ວນ ເພື່ອລົມທົບລາຍຈ່າຍໃນວຽກງານສ່ວນລວມໃດໜຶ່ງຂອງບ້ານເຊັ່ນ: ວຽກທີ່ຂັ້ນເທິງມອບໝາຍ, ວຽກທີ່ເກີດຂຶ້ນແບບສຸກເສີນ-ບັງເອີນ, ໂຄງການພັດທະນາຂອງບ້ານ ແລະ ອື່ນໆ.

**ມາດຕາ 3 ຫຼັກການເກັບ**

ການເກັບເງິນປະກອບສ່ວນພັດທະນາບ້ານຈາກປະຊາຊົນ ຕ້ອງຮັບປະກັນຫຼັກການສະເໝີພາບ, ຍຸຕິທຳ ແລະ ລວມສູນປະຊາທິປະໄຕ, ຖືກຕ້ອງຕາມກົດໝາຍ, ລະບຽບການຂອງລັດ, ເປີດເຜີຍ, ໂປ່ງໃສ ແລະ ກວດສອບໄດ້.

**ມາດຕາ 4 ຂອບເຂດນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບບ້ານໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ເປົ້າໝາຍການປະກອບສ່ວນຂອງປະຊາຊົນ

**ມາດຕາ 5 ເງື່ອນໄຂກຳນົດເປົ້າໝາຍປະກອບສ່ວນ**

- ເປັນເປົ້າໝາຍປະກອບສ່ວນທີ່ຂັ້ນເທິງມີຄຳສັ່ງ ຫຼື ແຈ້ງການໃຫ້ປະຕິບັດ;
- ເປັນວຽກງານ, ກິດຈະການ ຫຼື ພາລະກິດ ໃນຂົງເຂດການເມືອງ-ການປົກຄອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການປົກປັກຮັກສາຊັບພະຍາກອນທຳມະຊາດ-ສິ່ງແວດລ້ອມ ທີ່ມີຜົນກະທົບທັງທາງບວກ ແລະ ທາງລົບຕໍ່ສິດຜົນປະໂຫຍດລວມຂອງປະຊາຊົນພາຍໃນບ້ານ;
- ເປັນວຽກງານ, ກິດຈະການ ຫຼື ພາລະກິດທີ່ມີຄວາມສຳຄັນ, ຈຳເປັນຕໍ່ການດຳລົງຊີວິດຕົວຈິງຂອງປະຊາຊົນພາຍໃນບ້ານ.

**ມາດຕາ 6 ຜູ້ມີສິດກຳນົດເປົ້າໝາຍປະກອບສ່ວນ**

ນອກຈາກເປົ້າໝາຍປະກອບສ່ວນທີ່ຂັ້ນເທິງປຸກລະດົມໃຫ້ປະຕິບັດແລ້ວ ແມ່ນກອງປະຊຸມບ້ານເປັນຜູ້ພິຈາລະນາ ແລະ ມີມະຕິຕົກລົງວ່າວຽກງານ, ກິດຈະການ ຫຼື ພາລະກິດໃດຂອງບ້ານ ທີ່ສາມາດຈັດເປັນເປົ້າໝາຍ ທີ່ປະຊາຊົນຕ້ອງມີພັນທະປະກອບສ່ວນ ໂດຍແມ່ນອົງການປົກຄອງບ້ານເປັນຜູ້ສະເໜີ.

**ມາດຕາ 7 ວິທີກຳນົດເປົ້າໝາຍປະກອບສ່ວນ**

ນອກຈາກກໍລະນີເຫດການເກີດຂຶ້ນແບບສຸກເສີນ-ບັງເອີນ ແລະ ຂັ້ນເທິງມອບໝາຍໃຫ້ປະຕິບັດແລ້ວ, ອົງການປົກຄອງບ້ານຕ້ອງກຳແໜ້ນວຽກງານ, ກິດຈະການ ຫຼື ພາລະກິດດ້ານຕ່າງໆ ທີ່ມີຄວາມສຳຄັນ ແລະ ຈຳເປັນຕໍ່ການດຳລົງຊີວິດຂອງປະຊາຊົນທີ່ຕ້ອງໄດ້ຮັບການປັບປຸງແກ້ໄຂ, ທຳການວິເຄາະວິໄຈ, ສ້າງເປັນໂຄງການ ແລະ ຄິດໄລ່ມູນຄ່າຊັດເຈນ, ຈັດລຽງບູລິມະສິດຢ່າງພາວະວິໄສ, ປຶກສາຫາລືກັນໃນກອງປະຊຸມອົງການປົກຄອງບ້ານໃຫ້ລະອຽດແລ້ວ ຈຶ່ງພ້ອມກັນເລືອກເຟັ້ນເອົາໂຄງການທີ່ຈະເປັນເປົ້າໝາຍປະກອບສ່ວນໄປສະເໜີຕໍ່ກອງປະຊຸມບ້ານພິຈາລະນາຮັບຮອງ.

ໝວດທີ 3
ການເກັບ ແລະ ການໃຊ້ຈ່າຍເງິນປະກອບສ່ວນຂອງປະຊາຊົນ

ມາດຕາ 8 ຂັ້ນຕອນການກຳນົດລະດັບອັດຕາປະກອບສ່ວນ

- ບົນພື້ນຖານການກຳແໜັນເປົ້າໝາຍ ທີ່ຕ້ອງປະກອບສ່ວນສຳລັບວຽກງານໃດໜຶ່ງຂອງບ້ານ, ອົງການປົກຄອງບ້ານ ພິຈາລະນາກຳນົດລະດັບອັດຕາປະກອບສ່ວນສຳລັບເປົ້າໝາຍຕ່າງໆ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ຄວາມອາດສາມາດຂອງເປົ້າໝາຍຫຼາຍທີ່ສຸດ ໂດຍການເປັນເສນາທິການຂອງການເງິນບ້ານ;
- ການກຳນົດລະດັບອັດຕາປະກອບສ່ວນຕາມໂຄງການຕ້ອງຮັບປະກັນຫຼັກການຍຸຕິທຳ, ຜູ້ມີລາຍຮັບຫຼາຍກໍ່ປະກອບສ່ວນຫຼາຍ, ຜູ້ມີລາຍຮັບໜ້ອຍກໍ່ປະກອບສ່ວນໜ້ອຍ ຫຼື ທຸລະກິດປະເພດດຽວກັນມີລາຍຮັບເທົ່າທຽມກັນກໍ່ຕ້ອງປະກອບສ່ວນເທົ່າກັນ, ບໍ່ໃຫ້ເອົາລັດເອົາປຽບຊຶ່ງກັນ ແລະ ກັນ, ຜູ້ທຸກຍາກຂາດເຂີນແທ້ກໍຕ້ອງມີການຍົກເວັ້ນ;
- ໄຂກອງປະຊຸມບ້ານ ເພື່ອລຸລ່ອງ, ປຸກລະດົມຂົນຂວາຍ ແລະ ພິຈາລະນາຮັບຮອງເອົາອັດຕາປະກອບສ່ວນໂດຍມີການບັນທຶກກອງປະຊຸມຕາມລະບຽບ;
- ແຈ້ງຊື່ໂຄງການ, ອັດຕາປະກອບສ່ວນ, ກຳນົດເວລາສຳເລັດການຈັດຕັ້ງປະຕິບັດໃຫ້ແຕ່ລະເປົ້າໝາຍໄດ້ຮັບຊາບໂດຍການຕິດປະກາດຢູ່ໜ້າຫ້ອງການບ້ານ ແລະ ໃຫ້ຫົວໜ້າໜ່ວຍ ແຈ້ງໃຫ້ສະມາຊິກໜ່ວຍຂອງຕົນປະຕິບັດ.

ມາດຕາ 9 ການເກັບເງິນປະກອບສ່ວນພັດທະນາບ້ານ

- ການເງິນບ້ານເປັນຜູ້ຮັບຜິດຊອບເກັບເງິນປະກອບສ່ວນທຸກປະເພດຂອງບ້ານ;
- ເງິນປະກອບສ່ວນຂອງປະຊາຊົນເປັນພູດລາຍຮັບຂອງບ້ານໂດຍກົງເພື່ອນຳໃຊ້ເຂົ້າໃນເປົ້າໝາຍປະກອບສ່ວນສະເພາະຂອງບ້ານ.

ມາດຕາ 10 ການຄຸ້ມຄອງ ແລະ ເບີກຈ່າຍເງິນປະກອບສ່ວນພັດທະນາບ້ານ

- ເງິນປະກອບສ່ວນຂອງປະຊາຊົນຕ້ອງມອບເຂົ້າບັນຊີຂອງບ້ານທີ່ເປີດໄວ້ຢູ່ຄັງເງິນຂັ້ນເມືອງ, ຕາມລະບຽບທີ່ກະຊວງການເງິນວາງອອກ;
- ເງິນປະກອບສ່ວນຂອງປະຊາຊົນຕ້ອງຈ່າຍຮັບໃຊ້ເປົ້າໝາຍສະເພາະເທົ່ານັ້ນ ແລະ ຈ່າຍຢ່າງເຕັມສ່ວນ ໂດຍບໍ່ໃຫ້ຫັກໄວ້;
- ການຈ່າຍເງິນປະກອບສ່ວນຕ້ອງຮັບປະກັນຫຼັກການເປີດເຜີຍ, ໂປ່ງໃສ ແລະ ມີການກວດສອບຢ່າງເຂັ້ມງວດ.

ມາດຕາ 11 ລະບອບຖືບັນຊີເງິນປະກອບສ່ວນພັດທະນາບ້ານ

- ເງິນປະກອບສ່ວນຂອງປະຊາຊົນຕ້ອງຖືກຈົດເຂົ້າບັນຊີຂອງແຕ່ລະວຽກ ຫຼື ແຕ່ລະເປົ້າໝາຍ;

- ການເກັບເງິນປະກອບສ່ວນຕ້ອງໄດ້ຈົດກ່າຍລົງບັນຊີໃສ່ປຶ້ມລາຍຮັບ; ການເກັບເງິນທຸກໆເທື່ອຕ້ອງອອກໃບຮັບເງິນໃຫ້ຜູ້ປະກອບສ່ວນ, ສະຫຼຸບບັນຊີເປັນລາຍວັນ ແລະ ຈຳແນກໃຫ້ແຈ້ງເປັນແຕ່ລະເປົ້າໝາຍ;
- ການຈ່າຍເງິນປະກອບສ່ວນຕ້ອງຈົດກ່າຍລົງບັນຊີໃສ່ປຶ້ມຕິດຕາມລາຍຈ່າຍ ແລະ ຈ່າຍໃຫ້ຖືກເປົ້າໝາຍຢ່າງເຂັ້ມງວດ;
- ຕ້ອງສະຫຼຸບສັງລວມລະອຽດການເກັບ ແລະ ການໃຊ້ຈ່າຍເງິນປະກອບສ່ວນຂອງປະຊາຊົນສຳລັບແຕ່ລະເປົ້າໝາຍເພື່ອລາຍງານໃຫ້ກອງປະຊຸມບ້ານຮັບຊາບ.

ມາດຕາ 12 ການຕິດຕາມກວດກາການເກັບ ແລະ ຈ່າຍເງິນປະກອບສ່ວນພັດທະນາບ້ານ

ການເກັບ ແລະ ການຈ່າຍເງິນປະກອບສ່ວນພັດທະນາບ້ານຂອງປະຊາຊົນແມ່ນຢູ່ພາຍໃຕ້ການຕິດຕາມກວດກາຂອງຄະນະພັກ ແລະ ອົງການປົກຄອງບ້ານ ໃນກໍລະນີມີຄວາມຈຳເປັນ ອາດສະເໜີໃຫ້ອົງການກວດກາຂັ້ນເມືອງລົງມາກວດກາ.

## ໝວດທີ 4
## ນະໂຍບາຍ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 13 ນະໂຍບາຍ

ອົງການປົກຄອງບ້ານ, ພະນັກງານການເງິນບ້ານ, ປະຊາຊົນ ທີ່ປະຕິບັດລະບຽບການເສຍ ຫຼື ເກັບເງິນປະກອບສ່ວນໄດ້ດີ, ມີຄວາມເຂັ້ມງວດ ແລະ ໂປ່ງໃສຈະໄດ້ຮັບການພິຈາລະນາໃຫ້ໄດ້ຮັບການຍ້ອງຍໍຊົມເຊີຍຕາມຄວາມເໝາະສົມ.

ມາດຕາ 14 ມາດຕະການຕໍ່ຜູ້ລະເມີດ

ປະຊາຊົນຜູ້ທີ່ມີເຈດຕະນາບໍ່ປະກອບສ່ວນໃນກິດຈະກຳຕ່າງໆ ຕາມການຕົກລົງຂອງບ້ານຈະຖືກສຶກສາອົບຮົມ, ຕຳນິຕິຕຽນ ຫຼື ຖືກປະຕິບັດມາດຕະການຕາມລະບຽບຂອງບ້ານ.

ອົງການປົກຄອງບ້ານ, ພະນັກງານການເງິນບ້ານທີ່ລະເມີດຂໍ້ຕົກລົງສະບັບນີ້ຈະຖືກສຶກສາອົບຮົມ, ຕຳນິຕິຕຽນ, ຖືກປັບໃໝ, ຕ້ອງໃຊ້ແທນຄືນ ຫຼື ຖືກດຳເນີນຄະດີຕາມກົດໝາຍ, ລະບຽບການ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

ມາດຕາ 15 ການຈັດຕັ້ງປະຕິບັດ

- ມອບໃຫ້ກົມການປົກຄອງທ້ອງຖິ່ນ ກະຊວງພາຍໃນ ເປັນເຈົ້າການໃນການຈັດຕັ້ງເຜີຍແຜ່, ເຊື່ອມຊຶມ, ແນະນຳ, ຕິດຕາມ ແລະ ກວດກາຜົນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ;

- ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນເຜີຍແຜ່, ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດໃຫ້ເປັນເອກະພາບກັນ.

**ມາດຕາ 16 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງວ່າດ້ວຍ ການເກັບເງິນປະກອບສ່ວນພັດທະນາບ້ານຂອງປະຊາຊົນ ສະບັບເລກທີ 632/ພນ, ລົງວັນທີ 14 ກັນຍາ 2012.

ລັດຖະມົນຕີ

ຄຳໝັ້ນ ສູນວິເລີດ